ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 238 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18-05-2020

# ດຳລັດ
# ວ່າດ້ວຍ ແນວພັນພືດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ກະສິກຳ ສະບັບເລກທີ 01/98ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນ ແລະ ກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0172/ກປ, ລົງວັນທີ 25 ກຸມພາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານແນວພັນພືດ ເພື່ອອະນຸລັກແນວພັນພືດພື້ນເມືອງ, ແນວພັນພືດທ້ອງຖິ່ນ, ສົ່ງເສີມການນຳໃຊ້ ແນວພັນພືດປັບປຸງ, ແນວພັນພືດໃໝ່ ທີ່ມີຄຸນລັກສະນະພັນດີ ທັງປະລິມານ ແລະ ຄຸນນະພາບ, ໃຫ້ແທດເໝາະກັບ ແຕ່ລະທ້ອງຖິ່ນ ແນໃສ່ຄຸ້ມຄອງ ແລະ ຍົກລະດັບການຜະລິດພືດ ໃຫ້ມີປະສິດທິຜົນສູງ, ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ການຜະລິດພືດເປັນສິນຄ້າ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ແນວພັນພືດ**

ແນວພັນພືດ ແມ່ນ ເມັດພັນພືດ ຫຼື ສ່ວນຂະຫຍາຍພັນພືດ ຂອງກຸ່ມພືດ ທີ່ມີກຳມະພັນ, ລັກສະນະທາງ ພຶກສາສາດທີ່ຄືກັນ ຫຼື ຄ້າຍຄືກັນ ແລະ ມີຄຸນລັກສະນະສະເພາະຕົວ, ມີຄວາມສະໝ່ຳສະເໝີ, ມີຄວາມຄົງຕົວທາງ ດ້ານກາຍະພາບ ແລະ ມີຄວາມແຕກຕ່າງຈາກກຸ່ມອື່ນ ຊຶ່ງປະກອບດ້ວຍ ແນວພັນພືດພື້ນເມືອງ, ແນວພັນພືດ ທ້ອງຖິ່ນ ແລະ ແນວພັນພືດປັບປຸງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ແນວພັນພືດພື້ນເມືອງ** ໝາຍເຖິງ ແນວພັນພືດ ທີ່ໄດ້ກຳເນີດຢູ່ພາຍໃນປະເທດ ມາແຕ່ດົນນານ ຊຶ່ງມີການ ນຳໃຊ້ຢ່າງແຜ່ຫຼາຍ;

2. **ແນວພັນພືດທ້ອງຖິ່ນ** ໝາຍເຖິງ ແນວພັນພືດ ທີ່ມີມາຕັ້ງແຕ່ເດີມ ຢູ່ໃນທ້ອງຖິ່ນໃດທ້ອງຖິ່ນໜຶ່ງ ຊຶ່ງສາມາດຮັກສາຄຸນລັກສະນະພິເສດສະເພາະຕົວ ຂອງແນວພັນພືດນັ້ນ;
3. **ແນວພັນພືດປັບປຸງ** ໝາຍເຖິງ ແນວພັນພືດທີ່ໄດ້ຈາກການປະສົມພັນ ຫຼື ຄັດເລືອກພັນ ແຕ່ຍັງຮັກສາລັກສະນະທາງກາຍະພາບຂອງພັນເດີມ;
4. **ເມັດພັນພືດ** ໝາຍເຖິງ ເມັດ ຫຼື ສ່ວນໃດສ່ວນໜຶ່ງຂອງພືດ ທີ່ໃຊ້ປູກ ຫຼື ຂະຫຍາຍພັນ ເປັນຕົ້ນຕໍ, ໜໍ່, ເຫງົ້າ, ງ່າ, ໃບ, ແໜງ, ຕາ, ຮາກ, ຫົວ, ດອກ, ໝາກ ຫຼື ແກ່ນ;
5. **ເຊື້ອພັນພືດ** ໝາຍເຖິງ ຊິ້ນສ່ວນ ຫຼື ທັງໝົດຕົ້ນພືດ ທີ່ມີຂໍ້ມູນພັນທຸກໍາ ທີ່ສາມາດນໍາໃຊ້ເຂົ້າໃນການປະສົມພັນໃຫ້ໄດ້ພັນພືດໃໝ່ ສໍາລັບການປູກຝັງ;
6. **ການອະນຸລັກເຊື້ອພັນພືດ** ໝາຍເຖິງ ການເກັບຮັກສາເຊື້ອພັນພືດ ແຕ່ລະຊະນິດ ໄວ້ໃນທະນາຄານເຊື້ອພັນ ແລະ ໄວ້ໃນທ້ອງຖິ່ນເດີມ;
7. **ເມັດພັນພືດປອມ** ໝາຍເຖິງ ເມັດພັນພືດທີ່ບໍ່ຖືກຕາມຊື່ເມັດພັນພືດ, ເຄື່ອງໝາຍ, ຄຸນນະພາບ, ວັນໝົດອາຍຸ ແລະ ຂໍ້ມູນຕ່າງໆ ທີ່ລະບຸໄວ້ໃນສະຫຼາກ ທີ່ໄດ້ຂຶ້ນທະບຽນແລ້ວ;
8. **ການກວດກາພື້ນທີ່ການຜະລິດເມັດພັນພືດ** ໝາຍເຖິງ ຂະບວນການກວດກາຄຸນນະພາບເມັດພັນພືດ ທີ່ກໍາລັງຈະເລີນເຕີບໂຕໃນພື້ນທີ່ການຜະລິດ ເພື່ອກໍານົດລັກສະນະພັນເດີມ, ອັດຕາຄວາມບໍລິສຸດທາງດ້ານເມັດພັນພືດ ແລະ ລະດັບການເຈືອປົນຂອງເມັດພັນພືດ ຫຼື ເຈືອປົນກັບເມັດພັນພືດອື່ນ;
9. **ການທົດສອບຄຸນນະພາບເມັດພັນພືດ** ໝາຍເຖິງ ຂະບວນການວິໄຈບັນດາອົງປະກອບດ້ານຄຸນນະພາບ ຂອງເມັດພັນພືດ ໃນຫ້ອງວິໄຈ ເຊັ່ນ ຄວາມງອກ, ຄວາມບໍລິສຸດ, ຄວາມຊຸ່ມ ແລະ ການຕິດແປດສັດຕູພືດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານແນວພັນພືດ**

ລັດ ສົ່ງເສີມ ແລະ ພັດທະນາ ແນວພັນພືດ ໃຫ້ໄປຕາມທິດອຸດສາຫະກໍາທັນສະໄໝ ແລະ ຜະລິດເປັນສິນຄ້າ ບົນພື້ນຖານຍຸດທະສາດ, ແຜນແມ່ບົດ ກ່ຽວກັບວຽກງານແນວພັນພືດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ເປັນຕົ້ນ ການກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກໂນໂລຊີ, ໂຮງງານປຸງແຕ່ງເມັດພັນພືດທັນສະໄໝ, ບໍາລຸງສ້າງບຸກຄະລາກອນ, ອະນຸລັກເຊື້ອພັນພືດ, ຄົ້ນຄວ້າ ແລະ ທົດສອບ, ຂຶ້ນທະບຽນແນວພັນພືດ, ຄວບຄຸມຄຸນນະພາບການຜະລິດເມັດພັນພືດ ແລະ ຖ່າຍທອດເຕັກນິກວິຊາການ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນໃສ່ ການພັດທະນາແນວພັນພືດ ແລະ ການດໍາເນີນທຸລະກິດເມັດພັນພືດ ບົນພື້ນຖານຫຼັກການວິທະຍາສາດ, ການກໍ່ສ້າງພື້ນຖານໂຄງລ່າງວັດຖຸ ເຕັກໂນໂລຊີ, ໂຮງງານປຸງແຕ່ງເມັດພັນພືດທັນສະໄໝ, ສ້າງຕັ້ງກຸ່ມການຜະລິດເມັດພັນພືດ, ບຸກຄະລາກອນ, ການຄົ້ນຄວ້າ ແລະ ທົດສອບແນວພັນພືດ, ການຜະລິດ, ການນໍາເຂົ້າ ແລະ ການຈໍາໜ່າຍເມັດພັນພືດ ດ້ວຍການສະໜອງ ຂໍ້ມູນຂ່າວສານ, ເຕັກນິກວິຊາການ ແລະ ນະໂຍບາຍທີ່ດີ, ການປົກປ້ອງກໍາມະສິດ, ແຮງງານ, ພາສີ, ອາກອນ ແລະ ການເຂົ້າເຖິງແຫຼ່ງທຶນ ຕາມລະບຽບກົດໝາຍ.

**ມາດຕາ 5 ຫຼັກການ ກ່ຽວກັບວຽກງານແນວພັນພືດ**

ຫຼັກການ ກ່ຽວກັບວຽກງານແນວພັນພືດ ມີ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ນໍາໃຊ້ແນວພັນພືດ ຢ່າງມີປະສິດທິຜົນ ແລະ ຮັບປະກັນການປົກປັກຮັກສາເຊື້ອພັນພືດທີ່ດີບໍ່ໃຫ້ສູນພັນ;